# ບົດຂ່າວ

## ກອງປະຊຸມທົບທວນຜົນການດໍາເນີນທຸລະກິດ ທຄຕລ ປະຈໍາໄຕມາດ 2 ປີ 2019

ໃນວັນທີ 24-26 ກໍລະກົດ 2019, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມທົບທວນຜົນການດໍາເນີນທຸລະກິດ ປະຈໍາໄຕມາດ 2 ປີ 2019 ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 5 ຕຶກ C ສໍານັກງານໃຫຍ່ ທຄຕລ, ພາຍໃຕ້ການເປັນປະທານ ຂອງ ທ່ານ ພູຂົງ ຈັນທະຈັກ, ຜູ້ອໍານວຍການໃຫຍ່, ໂດຍມີຄະນະອໍານວຍການ, ບັນດາທ່ານຄະນະພະແນກ, ສູນຈາກສໍານັກງານໃຫຍ່, ຄະນະສາຂາໃນທົ່ວລະບົບ ພ້ອມດ້ວຍພະນັກງານກ່ຽວຂ້ອງເຂົ້າຮ່ວມ ທັງໝົດ 75 ທ່ານ.




ໃນກອງປະຊຸມໄດ້ມີການປຶກສາຫາລື ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນລະຫວ່າງບັນດາສາຂາ ແລະ ສໍານັກງານໃຫຍ່ ໃນຂົງເຂດການຈັດຕັ້ງປະຕິບັດວຽກງານ ຈຸດປະສົງກໍ່ເພື່ອເສີມຂະຫຍາຍບົດຮຽນທີ່ດີ, ຕີຖອຍບັນດາຈຸດອ່ອນ ແລະ ຂໍ້ຄົງຄ້າງ ກໍ່ຄືຫາວິທີປ້ອງກັນ ແລະ ແກ້ໄຂບັນດາຄວາມສ່ຽງໃນດ້ານຕ່າງໆ, ຫຼັງຈາກການປຶກສາແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ພະແນກຄົ້ນຄວ້າ-ພັດທະນາກໍ່ໄດ້ລາຍງານກ່ຽວກັບຜົນການດໍາເນີນງານລວມຂອງ ທຄຕລ ປະຈໍາໄຕມາດ 2/2019 ເຊິ່ງຊີ້ໃຫ້ເຫັນເຖິງການຂະຫຍາຍຕາໜ່າງບໍລິການ, ການຂາຍຜະລິດຕະພັນ ແລະ ຜົນການດໍາເນີນທຸລະກິດ.



ໂດຍລວມຜົນການດຳເນີນງານ ທຄຕລ ຮອດໄຕມາດ 2/2019 ແມ່ນມີຄວາມຄືບໜ້າໄປຕາມແຜນການທີ່ວາງໄວ້ ແຕ່ຍັງມີບາງດ້ານປະຕິບັດບໍ່ໄດ້ຕາມແຜນການ ເຊິ່ງຄະນະອຳນວຍການ ພ້ອມດ້ວຍຄະນະພະແນກ, ສູນ ສາຂາ ທຄຕລ ກໍ່ໄດ້ພ້ອມກັນປຶກສາຫາລືຢ່າງເລິກເຊິ່ງ ເພື່ອປັບປຸງ ແລະ ສູ້ຊົນໃນການປະຕິບັດງານໃຫ້ໄດ້ດີຂຶ້ນໃນໄຕມາດ 3 ແລະ ທ້າຍປີ 2019.

